ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 02 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 04 ມັງກອນ 2021

# ໜັງສືແຈ້ງ

**ເຖິງ:** ບັນດານັກສຶກສາ ທີ່ຮຽນຈົບສາຂາວິຊາຄູລ້ຽງເດັກ ແລະ ອະນຸບານ.

**ເລື່ອງ:** ຮັບສະໝັກພະນັກງານຄູລ້ຽງເດັກ ແລະ ອະນຸບານ ເພື່ອປະກອບໃຫ້ໂຮງຮຽນອະນຸບານ ທະນາຄານແຫ່ງ ສປປ ລາວ.

- ອີງຕາມຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກວິຊາສະເພາະກ່ຽວຂ້ອງໃນສະເພາະໜ້າ ແລະ ຍາວນານຢູ່ໂຮງຮຽນອະນຸບານ ທະນາຄານແຫ່ງ ສປປ ລາວ.

ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ຊາບວ່າ: ເພື່ອຮອງຮັບໃຫ້ແກ່ການປະຕິບັດວຽກງານມີຄວາມຄ່ອງຕົວ ແລະ ມີປະສິດທິພາບ, ທະນາຄານແຫ່ງ ສປປ ລາວ ມີຄວາມຕ້ອງການພະນັກງານໃໝ່ຈຳນວນໜຶ່ງ ເພື່ອປະກອບໃນຕຳແໜ່ງຄູລ້ຽງເດັກ ແລະ ອະນຸບານ ຢູ່ໂຮງຮຽນອະນຸບານ ທະນາຄານແຫ່ງ ສປປ ລາວ, ຊຶ່ງມີເງື່ອນໄຂດ້ານວຸດທິການສຶກສາ ແລະ ມາດຕະຖານ-ເງື່ອນໄຂຂອງຜູ້ສະໝັກ ມີຄືດັ່ງນີ້:

## I. ມາດຕະຖານຂອງຜູ້ສະໝັກ.

1. ເພດຍິງ, ອາຍຸບໍ່ເກີນ 30 ປີ;
2. ມີວຸດທິການສຶກສາຈົບຊັ້ນສູງ ຂຶ້ນໄປ ໃນສາຂາວິຊາຄູລ້ຽງເດັກ ແລະ ອະນຸບານ; ມີຄະແນນສະສົມສະເລ່ຍ 3,00 (GPA).
3. ມີຄວາມຮູ້ພື້ນຖານໃນການນຳໃຊ້ຄອມພິວເຕີ ແລະ ຮູ້ພາສາຕ່າງປະເທດພື້ນຖານທີ່ສາມາດສື່ສານໃນລະດັບໃດໜຶ່ງຍິ່ງເປັນການດີ (ພາສາອັງກິດ, ຈີນ, ຫວຽດນາມ ແລະ ອື່ນໆ).

## II. ເງື່ອນໄຂຜູ້ສະໝັກ.

1. ມີປະຫວັດການເຄື່ອນໄຫວຈະແຈ້ງ ແລະ ເປັນພົນລະເມືອງລາວ;
2. ສັດຊື່ບໍລິສຸດ ສາມາດເຮັດວຽກກັບເດັກນ້ອຍ ແລະ ຜູ້ໃຫຍ່ໄດ້ດີ;
3. ມີຄວາມຫ້າວຫັນ, ອົດທົນ ແລະ ມີຄວາມສາມັກຄີກັບເພື່ອນຮ່ວມງານ;
4. ມີຄວາມມັກຮັກໃນຕຳແໜ່ງງານທີ່ຕົນເອງສະໝັກ, ຖ້າມີປະສົບການກ່ຽວກັບຄູລ້ຽງເດັກ ແລະ ອະນຸບານຍິ່ງເປັນການດີ.

**III. ວິທີການສະໝັກ ແລະ ການເປີດ-ປິດຮັບເອກະສານ ສະໝັກງານ**

1. ຜູ້ທີ່ມີຄວາມສົນໃຈຕ້ອງການສະໝັກງານ ໃນຕຳແໜ່ງງານດັ່ງກ່າວທີ່ກຳນົດຂ້າງເທິງໃຫ້ມາພົວພັນ ແລະ ປະກອບເອກະສານທີ່ກ່ຽວຂ້ອງ ເພື່ອຍື່ນສະໝັກດ້ວຍຕົນເອງຢູ່ໂຮງຮຽນອະນຸບານທະນາຄານແຫ່ງ ສປປ ລາວ ບ້ານຊຽງຍືນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ. ໂທລະສັບ 021 213 111.

- ສຳລັບຜູ້ສະໝັກທີ່ບໍ່ມີມາດຕະຖານ-ເງື່ອນໄຂລະບຸຂ້າງເທິງນັ້ນ ແມ່ນຈະບໍ່ຮັບເອກະສານ.

2. ເອກະສານສະໝັກງານ ມີຄື:

- ໃບຄຳຮ້ອງຂຽນດ້ວຍຕົນເອງ;
- ຊີວະປະຫວັດ 4 ໜ້າ ພ້ອມທັງເຊັນຢັ້ງຢືນຈາກຜູ້ປົກຄອງ ແລະ ເຊັນປະທັບກາຈາກນາຍບ້ານທີ່ຕົນເອງອາໄສຢູ່ (ສະບັບຕົ້ນ);
- ສຳເນົາໃບປະກາດສະນິຍະບັດ ແລະ ໃບຄະແນນ (ເວລາຜູ້ສະໝັກມາຍື່ນເອກະສານໃຫ້ຖືໃບປະກາດສະນິຍະບັດ ແລະ ໃບຄະແນນຕົ້ນສະບັບມາຢັ້ງຢືນນຳ);
- ໃບຢັ້ງຢືນຮັບປະກັນຈາກຜູ້ປົກຄອງ ແລະ ເຊັນຢັ້ງຢືນຈາກນາຍບ້ານທີ່ຕົນອາໄສຢູ່ (ຕົ້ນສະບັບ);
- ໃບກວດສຸຂະພາບຈາກໂຮງໝໍລັດຢູ່ສູນກາງ (ສະບັບຕົ້ນ);
- ໃບແຈ້ງໂທດບໍ່ເກີນ 3 ເດືອນ (ຕົ້ນສະບັບ);
- ສຳເນົາຢັ້ງຢືນການຍົກລະດັບຜ່ານງານຕ່າງໆ (ຖ້າມີ);
- ຮູບຖ່າຍສີ ຫຼື ຂາວດຳ ຂະໜາດ 3x4 ຈຳນວນ 2 ໃບ (ຖ່າຍບໍ່ເກີນ 3 ເດືອນ).

3. ໄລຍະເວລາເປີດ-ປິດ ຮັບເອກະສານການສະໝັກງານ **ເລີ່ມແຕ່ວັນທີ 11 ມັງກອນ 2021 ຫາ 22 ມັງກອນ 2021** ເວລາ, ສະຖານທີ່ ແລະ ການສອບເສັງແມ່ນຈະແຈ້ງໃຫ້ຊາບຕາມພາຍຫຼັງ ຊຶ່ງຈະຕິດປະກາດລາຍຊື່ຜູ້ເຂົ້າສອບເສັງ ພ້ອມທັງວິຊາທີ່ຈະນຳໃຊ້ເຂົ້າໃນການສອບເສັງ ຢູ່ໂຮງຮຽນອະນຸບານ ທະນາຄານແຫ່ງ ສປປ ລາວ ຫຼື ເວັບໄຊທະນາຄານແຫ່ງ ສປປ ລາວ (www.bol.gov.la)

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ທີ່ມີຄວາມສົນໃຈ ເພື່ອຊາບ ແລະ ພົວພັນສະໝັກງານຕາມແຈ້ງການນີ້ດ້ວຍ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສາຍສະໝອນ ກິບເກສອນ